# ໂຮມເລື່ອງສັ້ນ

# ຂອງດີ



ປິຕິ ທິວາຈິນ

ສຳນັກພິມ ນັກປະພັນລາວ

# ໂຮມເລື່ອງສັ້ນ

# ຂອງດີ

ປິຕິ ທິວາຊົນ

ສຳນັກພິມ ນັກປະພັນລາວ

2012

# ໂຮມເລື່ອງສັ້ນ "ຂອງດີ"

..........................

ປີຕິ ທິວາຊົນ : ແຕ່ງ
ສີລຳພັນ ສຸລິຍະວົງສາ
ທອງເຫີນ ຊຸນພິທັກ : ບັນນາທິການ
ສິລະປິນ ຣາສີ : ເອື້ອເຟື້ອຮູບໜ້າປົກ
ດຣ. ພອນສະຫວັນ ຈັນທະວົງ : ພິສູດອັກສອນ
ສັນຕິ ສຸວິໄຊຍ໌ : ຄຳນຳ ສະເໜີ
ຄຳຕັນ : ແຕ້ມຮູບປະກອບ
ລຳເງິນ ອາດສະດາຈັນ : ອອກແບບ ຈັດໜ້າ
ສີສົມພອນ ພົມມະເທບ : ອອກແບບປົກ
ສະຫງວນລິຂະສິດ : ສຳນັກພິມນັກປະພັນລາວ

ສຳນັກພິມນັກປະພັນລາວ

..............................

ສຳນັກງານ ວາລະສານວັນນະສິນ (ຊົ່ວຄາວ)
ກະຊວງຖະແຫຼງຂ່າວ ວັດທະນະທຳ ແລະທ່ອງທ່ຽວ
ໂທລະສັບ/ແຟັກ: 856-21- 219871

**ຂໍ້ມູນທາງບັນນານຸກົມ ຂອງຫໍສະໝຸດແຫ່ງຊາດລາວ**

.............................................................

**ໂຮມເລື່ອງສັ້ນຂອງດີ**
ປີຕິ ທິວາຊົນ.--ວຽງຈັນ: ສຳນັກພິມ ນັກປະພັນລາວ 2012
130 ໜ້າ: ພາບປະກອບ 21 ຊມ
1. ໂຮມເລື່ອງສັ້ນ 2. ລວມວັນນະຄະດີ. I. ຊື່ເລື່ອງ

ເລກໝາຍມາດຕະຖານສາກົນປະຈຳໜັງສື
808.84--dc21
ISBN 978-9932-00-72-2
ພິມຄັ້ງແຮກ: 2012 ຈຳນວນ 2.000 ເຫຼັ້ມ
ທະບຽນ: 120 ພຈ 14032012

ໂຮມເລື່ອງສັ້ນ ຊຸດທຳອິດ ຂອງ ປີຕິ ທິວາຊົນ ຄົນບ້ານນອກ ຂຽນບອກເລົ່າປະສົບການຊົນນະບົດ ຂອງມາຈາກຊົນນະບົດ ບາງເທື່ອສົດ ບາງເທື່ອງດີ ຂອງດີ

# ສາລະບັນ


| | | |
|---|---|---|
| 1. | ເຄິ່ງຄ່າ | 15 |
| 2. | ກາປະທັບ | 23 |
| 3. | ຮອຍຊ້ຳ | 29 |
| 4. | ຂອງດີ | 37 |
| 5. | ເວທີ | 43 |
| 6. | ຮ່ອງນ້ຳເໜົ່າ | 49 |
| 7. | ຈຸດແຕກ | 57 |
| 8. | ຫຼີບປຶ້ມ | 63 |
| 9. | ເຫຍື່ອ | 69 |
| 10. | ທະເລຄຽດ | 73 |
| 11. | ຜີຫ້ອຍແຮ່ | 85 |
| 12. | ຜ້າຫົ່ມຜືນດຽວ | 93 |
| 13. | ບັນຫາ | 101 |
| 14. | ທົ່ງຫຼຽວຫຼັງ | 107 |
| 15. | ເດັກເຖື່ອນ | 117 |

# ບ.ກ ຂໍຂ່າວ

*ຈາກບັນທຶກຊາວບ້ານ ມາເປັນເລື່ອງສັ້ນຂອງຊາວເມືອງ*
*ຈາກຫຼາຍເລື່ອງ ໂຮມມາເປັນປຶ້ມຫົວນຶ່ງທີ່ມີເນື້ອຫາເອກະພາບ*
*ແຕ່ລະເລື່ອງສອດປະສານກັນ ເໝືອນເຄື່ອງປຸງໃນເຝີຖ້ວຍໃຫຍ່:*
*ພໍ່ຍອມສະຫຼະຊີວິດເພື່ອບ້ານເມືອງເປັນຢູ່ສະຫງົບສຸກ*
*ລູກໃຫຍ່ເປັນສາວເປັນນາງ ຍອມຂາຍຈິດວິນຍານ ອອກຈາກບ້ານເມືອງ*
*ເພື່ອໄລ່ລ່າຫາຄວາມຝັນບາງປະການຂອງຊີວິດ*
*ເມື່ອແນວໂຮມເດີນທາງໄປເຖິງຈຸດແຕກ*
*ເຍົາວະຊົນບາງຄົນກໍກາຍເປັນເດັກເຖື່ອນ*
*ປ່າດົງພົງໄພຖືກຂົ່ມຂືນລ່ວງເກີນ  ຊາວນາກໍໄຮ້ເວທີຂອງຕົນ*
*ບັນຫາກາຍເປັນຂອງຊື້ໄດ້ຂາຍດີ ຄືບັນຫາທີ່ບໍ່ມີໃຜຢາກແກ້*
*ຄວາມກຳບັດຂອງສັນດານຊາຍກາຍເປັນຮອຍຊ້ຳ*
*ສິນຄ້າສົ່ງອອກຫຼັກ ຕ້ອງມີກາປະທັບ*
*ຊຶ່ງສັງເວີຍດ້ວຍເລືອດເນື້ອເຫື່ອໄຄຂອງຊາວຜູ້ອອກແຮງງານ...*
*....ແລະຫຼາຍໆ ເລື່ອງທີ່ເຂົາບໍາສະເໜີ ເປັນພາບສັນຍະລັກຂອງທ້ອງຖິ່ນ*
*ເທົ່າທີ່ເຂົາປະສົບພົບພໍ້ມາ*
*ເຫດການທຳມະດາທີ່ເຂົາບັນທຶກໄວ້ນີ້ ມັນຄົງຈະກະຕຸ້ນໃຫ້ໄທເຮົາເຈົ້າ*
*ຂ້ອຍຄິດຫາງໍາ ຫ່ວງໃຍ ໃນອາລົມຮັກຊາດບ້ານເມືອງ ຮັກຄອບຄົວ*
*ຮັກໜ້າທີ່ວຽກງານ.. ແລະເຊື່ອວ່າປຶ້ມຫົວນີ້ຄົງຊວນໃຫ້ທ່ານຜູ້ອ່ານ*
*ຮ່ວມຄິດ ຮ່ວມສ້າງສັນນຳກັນ*

*ຂໍຂອບໃຈ ທີ່ມີປຶ້ມແນວນີ້ ໃຫ້ໄດ້ອ່ານ*
*ສີລຳພັນ ສຸລິຍະວົງສ໌*

# ຖ້ອຍຄຳ ນຳສະເໜີ

*ໄດ້ອ່ານເລື່ອງສັ້ນຂອງ **ປີຕິ ທິວາຊຶນ** ເລື່ອງທຳອິດຄື **"ເຄິ່ງຄ່າ"** ທີ່ລົງພິມ ໃນນິຕະຍະສານສຍາມຣັຖ ສັປດາວິຈານ ທີ່ແປເປັນພາສາໄທໂດຍ ອຸໄຣ ພົລຍັຣມ*

*ປີຕິ ທິວາຊຶນ ນຳສະເໜີເຖິງຄວາມເປັນໄປໃນໂຮງໝໍ ທີ່ຊວນໃຫ້ຄິດວ່າ ສັງຄົມມະນຸດຊາດ ເປັນຫຍັງຈຶ່ງວົນວຽນຢູ່ແຕ່ບ່ອນເກົ່າ ບໍ່ຕ່າງຫຍັງກັບໃນອະດີດ ທີ່ຜູ້ເປັນພໍ່ຕ້ອງໄປຫາຢືມເງິນ ເພື່ອນຳໄປຊອກຊື້ໝູມາເຮັດຮີດ ເພາະຜີບັນພະບຸລຸດມາສູນ ທີ່ລູກເຂີຍ ຫຼານເຂີຍເຮັດຜິດຮີດ ຈົນເຮັດໃຫ້ລູກເຕົ້າປ່ວຍ ແລະລູກຈະບໍ່ເຊົາປ່ວຍຖ້າຜີບໍ່ໄດ້ກິນໝູ*

*ເລື່ອງສັ້ນເລື່ອງນີ້ ຂ້ອຍໄດ້ເອົາໃຫ້ທ່ານໝໍຝ່າຍບໍລິຫານຂັ້ນສູງຜູ້ໜຶ່ງ ອ່ານ ພໍລາວອ່ານສຸດ ລາວເງີຍໜ້າຫຼຽວເບິ່ງຂ້ອຍພ້ອມກັບເວົ້າຂຶ້ນວ່າ*
*" ມັນບໍ່ປານນັ້ນນ່າ"*
*ແຕ່ຂ້ອຍກໍຄິດຖາມໃນໃຈວ່າ ປານນັ້ນ ມັນປານໃດ ?*
*ປີຕິ ທິວາຊຶນ ຄົນຂຽນເລື່ອງສັ້ນລັດທິສຽດສີ ທີ່ບໍ່ເຖິງຂັ້ນສຽບແທງ ບໍ່ເຈັບແສບເຖິງຂັ້ນເຈັບປວດລວດລ້າວ ເພາະປີຕິ ທິວາຊຶນ ຂຽນພຽງເພື່ອຢາກໃຫ້ ດາດຫູດັງປັ້ດ ! ທໍ່ນັ້ນ*

*ສັນຕິ ສຸວິໄຊຍ໌*
*15 ກໍລະກົດ 2009*
*ຕູບຊອງຄຳ /ສະຫວັນນະເຂດ*

# ຄ້າຍຄືຄຳນຳ

ຮັກນ້ຳ ຮັກປາ ຮັກປ່າ ຮັກຜົນ ຮັກຄົນ ຮັກສັດ..
ຄວາມຮັກເຫຼົ່ານັ້ນ ກະຕຸ້ນໃຫ້ມີຄວາມຢາກ...ຢາກຂຽນໜັງສື
ເຄີຍຂຽນເລື່ອງສັ້ນມາຫຼາຍປີ ລົງຕາມໜ້າໜັງສືພິມສະບັບຕ່າງໆ ແຕ່ຍັງບໍ່ເຄີຍໂຮມເປັນເຫຼັ້ມຈັກເທື່ອ ມີແຕ່ຜັດກັນຂຽນວຽນກັນອ່ານກັບເພື່ອຝູງພັກພວກ

ຈາກຂັ້ນຕອນປະຕິສົນທິ ຈົນຮອດໄລຍະຖືພາ ໃຊ້ເວລາຫຼາຍປີ
ຖືພາໄລຍະຍາວ ເຫິງປານໃດຊິຄອດອອກມາ ?
ສຳນັກພິມແຫ່ງນີ້ເຫັນຄວາມຢາກ
ມັນຢາກຄອດອອກມາມີນຕາເບິ່ງໂລກ ໃນບັນນະພົບອັນໄພສານ ຈຶ່ງມີ "ຂອງດີ" ສອດແຊກຂຶ້ນມາຕື່ມອີກຈົນໄດ້ ນັບເປັນຄວາມພາກພູມໃຈຂອງທັງຜູ້ອ່ານ ແລະຜູ້ຂຽນ

ຂໍຂອບໃຈ ເພື່ອນຮັກ ພັກພວກທີ່ໃຫ້ການອຸປະຖຳຄ້ຳຈູນຮ່ວມແຮງຮ່ວມໃຈ
ຂໍຂອບໃຈ ສຳນັກພິມ ຊ່ວຍຊູຍູ້ໜູນໃຫ້ປຶ້ມຫົວນີ້ຄອດອອກມາ
ຂໍຂອບໃຈ ສິລະປິນ ຣາສີ ທີ່ເອື້ອເຟື້ອຮູບອັນສູງຄ່າມາເປັນພາບປົກ
ຂໍຂອບໃຈ ດຣ. ພອນສະຫວັນ (ເຈົ້າຂອງປຶ້ມວັດຈະນານຸກົມລາວ-ຫວຽດ)
ທີ່ຍິນດີສະຫຼະເວລາກວດແກ້ ພິສູດອັກສອນຕົ້ນສະບັບ "ຂອງດີ"
ຂໍຂອບໃຈ ອ. ສັນຕິ ສຸວິໄຊຍ໌ ຊ່ວຍຂຽນຄຳນຳ ອ. ຄຳຕັນຊ່ວຍແຕ້ມຮູບ
ປະກອບລົດຊາດໃຫ້ "ຂອງດີ" ມີສງ່າໂດດເດັ່ນ ເປັນຕາຢາກອ່ານຫຼາຍຂຶ້ນ
ຂໍຂອບໃຈ ບ.ກ. ສີລຳພັນ ທີ່ເປັນເຈົ້າການ ປະສານງານຫຼາຍເລື່ອງຈົນຄົບ
ຂໍຂອບໃຈ ບັນດາເພື່ອນພ້ອງ ນ້ອງພີ່ໃນກອງບັນນາທິການທີ່ຊ່ວຍກັນດຶງ
ຊ່ວຍກັນຊຸກ ຈົນວ່າຂອງດີ ສຳເລັດເປັນຕົວເປັນຕົນຂຶ້ນມາ
ຂໍຂອບໃຈ ທ່ານຜູ້ອ່ານ ທີ່ໃຫ້ການຕ້ອນຮັບ ແລະຊ່ວຍວິພາກວິຈານ
ເພື່ອປັບປຸງ ໃນການຈັດພິມອີກເທື່ອໜ້າ

ດ້ວຍຄວາມເຄົາລົບ ຮັກ ສັດທາ ແລະປາດຖະໜາດີ
ຈາກ ປິຕິ ທິວາຊົນ

# ຖ້ອຍຖລຳ

*ຕົວລະຄອນຊຸມນີ້ ບ້າງເກີດໃນປຶ້ມ ບ້າງຕາຍໃນປຶ້ມ*
*ແຕ່ພວກມັນບໍ່ເຄີຍຕາຍໄປຈາກຄວາມຊົງຈຳຂອງຊາວຊົນນະບົດ*
*ພວກມັນບໍ່ຕັ້ງໃຈຖ່າຍທອດປະສົບການບ້ານນອກ*
*ແຕ່ຕ້ອງຝືນໃຈເຂົ້າມາຢູ່ໃນບັນນະຄານຂອງເຮົາ*
*ພວກມັນມີສະເໜດຶງດູດໃຫ້ຂ້ອຍຖະຫຼຳເຂົ້າໄປຄຸກຄີຢູ່ໃນນັ້ນທັງໆທີ່ຂ້ອຍກໍບໍ່*
*ຢາກເປັນຄົນບ້ານນອກ !*

*ຜູ້ເຖົ້າພິການ ຈາກເລື່ອງເຄິ່ງຄ່າ ຍ່າງສາມຂາ*
*ໃຊ້ເວລາສິບປີ ເລາະລຽບໄປຮອດທີ່ບໃດແລ້ວ ?*

*ປ້າວັນນາ ຈາກເລື່ອງຂອງດີ ຮູ້ຊຶ້ງເຖິງໃນໝາກມອນໄຂ່*
*ຕື່ນເລີກໝາ ບາງປານໃດແລ້ວ ?*

*ຄົນຂີ່ລົດຫຼວງ ຈາກເລື່ອງບັນຫາ*
*ມີບັນຍາຖືກເລກນຳເຂົາຈັກເທື່ອແລ້ວ ?*

*ຄົນລາກອວນ ຈາກເລື່ອງ ທະເລຄຽດ*
*ນຳຂ່າວຫຍັງມາບອກ ພໍ່ແມ່ພີ່ນ້ອງຂອງເຫຼົ່າເພື່ອນຝູງ ?*

*ການຂຽນເລື່ອງສັ້ນ ເປັນໝູ່ກັບຄວາມໄຝ່ຝັນໃນຫຼືບປຶ້ມ*
*ສ່ວນການທຸ່ມເທ ສັນສ້າງຍ່ອມເປັນໝູ່ກັບການລົງທຶນ*

*ແຕ່ສຳລັບປາກກາດວງໜຶ່ງ ຄວາມຝັນຍ່ອມມີຫຼາຍກວ່າທຶນຮອນ*
*ທຶນຢາກກິນກິນຝັນຂອງພວກເຮົາຫຼາຍສ່ວນກໍ່ໃຫ້ມັນກິນໄປສາເຫາະ*
*ນ້ຳໜ້າຝັນລົມໆ ແລ້ງໆ ຊິຫວງໄວ້ເຮັດຫຍັງ*
*ອຸທິດພອນສະຫວັນຈົນມັນບິວອອກໄປຫຼາຍທິດທາງພຸ້ນແຫຼະຈຶ່ງປະເສີດ*
*ຫາກບິວບໍ່ຂຶ້ນກໍ່ໃຫ້ມັນໝູບຕາຍຢູ່ໃຕ້ຕຽງນີ້ໂລດ*
*ຈະໄດ້ພິສູດກັນອອກວ່າໃຜເປັນໃຜ*
*ລະຫວ່າງປາກກາດວງໜຶ່ງ ກັບປຶ້ມຫົວໜຶ່ງ !*

*ທ່ານຜູ້ອ່ານເພາະເປັນເພື່ອນມິດກັບເລື່ອງສັ້ນ*
*ຈຶ່ງຢາກເບິ່ງໜ້າຕາເບິ່ງເນື້ອໃນໃຈແກ່ນຂອງມັນ*
*ຂ້ອຍກໍ່ບໍ່ອາດເປັນສັດຕູກັບເລື່ອງສັ້ນທັງປວງ*
*ຈຶ່ງຍອມອຸທິດວັນເວລາ,ສະຕິ,ວິນຍານ*
*ເພື່ອໃຫ້ມັນໄດ້ມືນຕາອອກມາດີ້ນຮົນ ໃນບັນນະພິພົບອັນໄພສານ*
*ຂອບໃຈທ່ານ ເປັນນຶ່ງໃນບັນດາຜູ້ສະໜັບສະໜຸນທັງມວນ*

*ປີຕິ ທິວາຊົນ*
*ສະຫວັນ 02/08/2006*

# ຄຳນຳ ຂອງສຳນັກພິມນັກປະພັນລາວ

*"ໂອຍ ! ມີຫຼາຍໆເລື່ອງ ຫຼາຍໆກອນ ແຕ່ງກອງໄວ້ແລ້ວ ແຕ່ບໍ່ມີທຶນພິມ"*

ຄືຄຳກ່າວຄຳຄວນ ໂຫຍຫວນ ຂອງເຫຼົ່ານັກກະວີ ນັກປະພັນ ທີ່ດັງອອກມາຈາກປາກເມື່ອ ຖືກຖາມເຖິງຜົນງານການປະດິດຄິດແຕ່ງ ສ່ວນສຽງ ຮ່ຳຮ້ອງ ກຶກກ້ອງ ອຶງຄະນຶງ ຂອງຫົວໃຈທີ່ຢູ່ພາຍໃນນັ້ນ ດັ່ງຊ່ຳໃດ ?

ມັນຄົງບໍ່ດ້ອຍກວ່າ ສຽງກອງມະໂຫລະທຶກ (ຄ້ອງບ້າງ)

ກອງມະໂຫລະທຶກເມື່ອຖືກຕີ ໃນຍາມບຸນບັ້ງໄຟ ອັນເປັນພິທີກຳສັກສິດໃນອະດີດ ອົງພະຍາແຖນ ຜູ້ຢູ່ເບື້ອງບົນຟ້າ ກໍຖອກເທຝົນລົງມາສູ່ໂລກມະນຸດ ໃຫ້ຄົນເມືອງລຸ່ມໄດ້ເຮັດລີ້ກິນປາ ເຮັດນາກິນເຂົ້າໂລດ.

ແຕ່... ສຽງຮ່ຳຮ້ອງ ກ້ອງອຶງຄະນຶງໃນໝາກຫົວໃຈຂອງເຫຼົ່ານັກກະວີ... ນັກປະພັນ ພັດເໝືອນກັບວ່າມິດມີ້ ຄົງເພາະໝາກຫົວໃຈຂອງພວກນີ້ ບໍ່ໄດ້ຖືກນຳໃຊ້ເຂົ້າໃນພິທີກຳສັກສິດໃດໜຶ່ງຄືກັບກອງມະໂຫລະທຶກ ດັ່ງນັ້ນ ສຽງຮ່ຳຮ້ອງ ດັ່ງກ່າວ ຈຶ່ງບໍ່ມີພະລັງພໍທີ່ຜູ້ຄົນທາງນອກຈະໄດ້ຍິນ ແລະເຂົ້າໃຈນຳ ນັກປະພັນ ນັກກະວີ ຫຼາຍຄົນຈຶ່ງຍັງບໍ່ທັນມີທຶນພຽງພໍ ທີ່ຈະນຳມາພິມປຶ້ມ ຝາກໄວ້ກັບຜືນແຜ່ນດິນຖິ່ນກຳເນີດ ແລະໃຫ້ຜູ້ຄົນໄດ້ອ່ານ.

ສຳນັກພິມ ນັກປະພັນລາວ ພາກພູມໃຈທີ່ໄດ້ຊ່ວຍໃຫ້ນັກປະພັນ ບົວ ທິວາຊົນໄດ້ "ໃຫ້ກຳເນີດ" ປຶ້ມຫົວທຳອິດນີ້ອອກມາ ເພື່ອວ່າໃຫ້ຄວາມຝັນລົມໆແລ້ງໆ ແລະພອນສະຫວັນຂອງເຂົາໄດ້ບິນອອກໄປຫຼາຍທິດທາງ ຊຶ່ງຈະໄດ້ພິສູດກັນອອກວ່າໃຜເປັນໃຜ ລະຫວ່າງປາກກາດວງໜຶ່ງ ກັບປຶ້ມຫົວໜຶ່ງ ແລະໝາກຫົວໃຈໜ່ວຍນຶ່ງ

ເມື່ອ "ຂອງດີ" ໄດ້ມີນຕາອອກມາດົ້ນຣົນ ຢູ່ໃນບັນນະພິພົບອັນໄພສານ ແລະໄຂແບຢູ່ຕໍ່ໜ້າແລ້ວ ເຈົ້າກໍຈົ່ງເບິ່ງໜ້າຕາ ເບິ່ງເນື້ອໃນໃຈແກ່ນຂອງມັນເອົາເອງເທາະວ່າ ມັນຄູ່ຄວນກັບການບຸໜົ້ນອອກມາຫຼືບໍ່ ? ແລະມັນສົມຄວນເປັນ "ຂອງດີ"ຫຼືບໍ່ ?

ຜູ້ອຳນວຍການ-ຫົວໜ້າບັນນາທິການ
ສຳນັກພິມ ນັກປະພັນລາວ
ຫົງເຫີນ ຊຸນພິທັກ

# ເຄິ່ງຄ່າ

ເລື່ອງສັ້ນລາງວັນທີ 1 ລະນຶກຄົບຮອບ 45 ປີ
ວັນສ້າງຕັ້ງກອງທັບ ປະຊາຊົນລາວ
ພິມລົງ ວັນນະສິນ ສະບັບເດືອນ ມັງກອນ 1994
ສຍາມຣັຖ ສັປດາວິຈານ 2/5/2541





ແມ່ເຖົ້າໄປນອນໂຮງໝໍໄດ້ຄືນນຶ່ງພໍດີ
ມື້ນີ້ພໍ່ເຖົ້າ ເຝົ້າຕູບຕາມລຳພັງ ຕູບຕໍ່າເລົ້າໂດດດ່ຽວຢູ່ກາງທົ່ງ ໄກຈາກບ້ານຊົ່ວໄກ່ບິນຕົກ, ມີຕົ້ນມີ້ ຕົ້ນມ່ວງ ໃຫ້ຮົ່ມເຢັນຕະຫຼອດປີ.

ຜູ້ເຖົ້າພິການ ມັກນັ່ງສານແຫຢູ່ໃນຕູບ ແດດຕອນສວາຍແຜ່ລັງສີໄປທົ່ວ, ຜູ້ເຖົ້າກະວົນກະວາຍ ກົ້ງໂກບຫຼຽວຂ້າມທົ່ງເຂົ້າໄປໃນບ້ານ,ຄອງຄອຍຫາໃຜບາງຄົນ.ລາວເຫັນພຽງແຕ່ຫຼັງຄາເຮືອນຫຼາຍຫຼັງ ສະທ້ອນແສງຕາເວັນເຫຼື້ອມຢູ່ມາບມາບ.ຜູ້ເຖົ້າຍ່າງສາມຂາເລາະໄປມາບໍ່ເປັນສຸກ...ຄອນໆຊິດລົມປາກໄລ່ໄກ່ໂຊະໂຊ່ະ !

"ສູຂຶ້ນໄປເລັມກິນຫຍັງຢູ່ເທິງເຮືອນ ?

ຢ່າຈອງຫອງໄດ່ ກູຕົ້ມໃສ່ໃບຂາມອ່ອນໄດ໋! "ລາວຈົ່ມສຽງຫອງ

ຊາຍໜຸ່ມຂີ່ລົດຖີບໄຕ່ຄັນແທນາ ມຸ່ງມາຍັງຕູບພໍ່ເຖົ້າ ມັນມາບອກຂ່າວທັງ ກະຫືດກະຫອບ:

" ແມ່ເຖົ້າ ຊິຖືກສົ່ງໄປໂຮງໝໍແຂວງ, ຢູ່ບ້ານເຮົາເພິ່ນປາດບໍ່ໄດ້ !"

" ປາດຫຍັງບັກຫຼ້າ ?"

" ປາດທ້ອງນັ້ນລ່ະ! ໃຫ້ເຈົ້າຕຽມເງິນ ຕຽມພົກເຄື່ອງນຸ່ງ ເຄື່ອງນອນໄວ້, ລົດໂຮງໝໍ ຊິໄປສົ່ງ ເຈົ້າຕ້ອງຈ່າຍຄ່ານ້ຳມັນເອົາເອງ".

" ຊິເຮັດແນວໃດບາດນີ້ ?

ເງິນຄຳກະບໍ່ມີ, ຫຼືວ່າ...ກູຊິຂາຍໃບອະນຸຍາດຕັດໄມ້...ຫື ?"

ພໍ່ເຖົ້າຄິດຄຳນວນຢູ່ດົນເຕີບແລ້ວ ຄານຄີໂຄ່ງເຂົ້າໄປໄຂຫີບສີດຳເກົ່າໆ.. ດຶງເອົາເຈ້ຍແຜ່ນນັ້ນອອກມາ, ລາວຈຳເປັນຕ້ອງ ສູນເສຍມັນໄປແລ້ວ

" ໝັ້ນມາເບິ່ງແຍງເຮືອນຊານ ເປີດໄກ່ໃຫ້ພໍ່ແມ່ເດີ້ ບັກຫຼ້າ !"

" ເອີ້ ! ພໍ່ເຖົ້າບໍ່ຕ້ອງຫ່ວງດອກ ! "

ມັນຕອບຄຳພໍ່ເຖົ້າ ເຮືອນມັນກໍຢູ່ສົ້ນບ້ານ ບ່ອນຫຼຽວເຫັນນີ້ເອງ ຫຼັງຈາກຈັດການເລາະຂາຍໃບສຳປະທານຕັດໄມ້ແລ້ວ, ບ່າຍມື້ນັ້ນຄົນເຖົ້າທັງຄູ່ໄດ້ຂຶ້ນລົດ ມຸ່ງໜ້າສູ່ເມືອງໃຫຍ່, ຜູ້ເຖົ້າມີເງິນສົດສາມແສນກີບໃນຖົງ.

*******

ຕຶກຫຼາຍຫຼັງພາຍໃນຮົ້ວໂຮງໝໍແຂວງ ບາງຫຼັງເກົ່າຕູບຊູບ ຄືເຫັດປອກເຖົ້າ ບາງຫຼັງໃໝ່ອ່ຽມໃຫຍ່ຍາວຂາວສະອາດ, ບາງຫຼັງມີກິ່ນຂີ້ວຫົວບົວບົກເລັດລອດອອກມາ.

ແມ່ເຖົ້າ ນອນຢຽດຢູ່ເທິງຕຽງເຫຼັກເກົ່າໆ ພາຍໃນຫ້ອງຮູບກ້ອນສາກ, ພວກນາຍໝໍ ຫຼັງຈາກຮັບໃບນຳສົ່ງ ແລະຈັດຫ້ອງໃຫ້ແລ້ວ ກໍຫາຍຕົວໄປ. ພໍຕາເວັນໃກ້ຕົກດິນ ມີນາງແພດຜູ້ນຶ່ງເຂົ້າມາເປີດໄຟ, ນາງຖາມອາການ ແລ້ວຍື່ນຢາເມັດໃຫ້ແມ່ເຖົ້າກິນ ທັງບອກວ່າ:

" ທ່ານໝໍ ເພິ່ນຍັງຄາວຽກ,ມື້ອື່ນຈຶ່ງຊິໄດ້ມາກວດລະອຽດ
ດຽວນີ້ໃຫ້ແມ່ ກິນຢາໄປກ່ອນ" ນາງງວາກໜ້າມາຖາມພໍ່ເຖົ້າ:
"ພໍ່ມີເງິນມານຳຢູ່ຫວະ?ຫາກຜ່າຕັດຕ້ອງໄດ້ຈ່າຍເງິນຫຼາຍສົມຄວນໄດ໋"
"ໂອຍ ລູກເອີຍ! ພໍ່ບໍ່ມີເງິນຄຳສັງແລ້ວ ມາຂໍອາໄສລູກຫຼານຢູ່ພີ້,
ຄັນຊິຖິ້ມກະຕາຍ ຄັນຊິຂາຍກະຂາດແລ້ວ !"
"ເອົາໄວ້ມື້ອື່ນ ບາດທ່ານໝໍໃຫຍ່ເພິ່ນມາ ຈຶ່ງຄ່ອຍເວົ້ານຳເພິ່ນເດີ້!
ລາງເທື່ອເພິ່ນຊ່ອຍໄດ້ !"

ໄດ້ຍິນຄຳນັ້ນ ພໍ່ເຖົ້າໂລ່ງໃຈຂຶ້ນຫຼາຍ. ຄືນນັ້ນພໍ່ເຖົ້າຄອຍຮັບໃຊ້ຄົນປ່ວຍຢ່າງໃກ້ຊິດ, ຍັງດີຢູ່ຂາລາວບໍ່ກຸດໝົດສອງເບື້ອງ, ບາງເທື່ອ ຈຳເປັນໃຊ້ໄມ້ເທົ້າກິ່ງດຽວເທົ່ານັ້ນເພື່ອຈຶ່ງແຂນອີກຂ້າງນຶ່ງໄວ້ຖືໂຖນ.

ຈົນຮອດຮຸ່ງເຊົ້າ ນາງແພດເຂົ້າມາສັກຢາ ແລ້ວອອກໄປ. ພໍ່ເຖົ້າຄອງຄອຍວ່າເທົ່າປານໃດທ່ານໝໍໃຫຍ່ຊິມາ,...ຫຼືເພິ່ນຄິດວ່າໄທບ້ານນອກບໍ່ມີເງິນບໍ ? ຮວ້າຍ ! ບໍ່ແມ່ນຕີ້ ! ລາງເທື່ອເພິ່ນອາດມີວຽກໄປທາງໃໝ່...ພໍ່ເຖົ້າກັງວົນໃນໃຈ. ແມ່ເຖົ້າຄວນຄາງອ້ອຍອິ່ນຍິ່ງເຮັດໃຫ້ເປັນຫ່ວງ...ດົນໄປແມ່ເຖົ້າມ້ອຍຫຼັບ...ພໍ່ເຖົ້າເລາະລຽບໄປຍັງຕຶກຫຼັງໃໝ່. ຕຶກຫຼັງນັ້ນມີແພດໝໍເຝົ້າຍາມຢູ່ບໍ່ຂາດ, ຄວາມແຕກຕ່າງລະຫວ່າງຕຶກສອງຫຼັງ ມັນຖືກສະຫຼຸບແລ້ວ ໃນຫົວສະໝອງຂອງພໍ່ເຖົ້າ.

ລາວພົບເພື່ອນເກົ່າໃນຫ້ອງນຶ່ງຂອງຕຶກຫຼັງໃໝ່

" ຈັນ !!" ລາວຮ້ອງສຽງດັງ, ດວງຕາສີ່ຫ້າຄູ່ຢູ່ໃນຫ້ອງ ຈ້ອງມາຍັງລາວເປັນຈຸດດຽວ. ບຸລຸດທີ່ຖືກເອີ້ນວ່າຈັນ ກໍທຳທ່າຕົກສະເງີ້ ຖາມຄືນວ່າ:

" ໂຕແມ່ນຮ້ອຍຕີຄຳເຄນບໍ ?"

" ແມ່ນແລ້ວ,ເຮົາແມ່ນເຄນແທ້ເຄນວ່າ!"

ທັງສອງສວມກອດກັນຢູ່ໃກ້ປະຕູ, ພໍ່ເຖົ້າເຊໄປເລັກນ່ອຍ, ທ່ານຈັບຈັບບ່າສັ່ນເບົາໆ ກ່ອນຈະປະຄອງແຂກພິການເຂົ້າໄປໃນຫ້ອງ.

" ຕ່າຍຕາຍ, ເຮົາບໍ່ຈື່ເລີຍ, ໄປຈັ່ງໃດ ມາຈັ່ງໃດ?
ໂຕຢູ່ສູນຟື້ນຟູຄົນພິການນີ້ບໍ ?"

" ເຮົາບໍ່ໄດ້ຢູ່ສູນ ! ອອກກິນເບ້ຍບຳນານຫຼາຍປີແລ້ວ,
ໂຕຄືຊິໄຂກດີແລ້ວບໍ ?"

" ໂອ໋, ທັງດີທັງບໍ່ດີເທົ່າໆ ກັນນັ້ນລະໝູ່ເອີຍ! ຫຼັງຈາກບັ້ນຮົບລາມເຊີນ ໂຕເຂົ້າໂຮງໝໍນາຍົມ ສ່ວນເຮົາໄປຮຽນຕໍ່ຢູ່ວຽດນາມ, ພໍຍຶດອຳນາດແລ້ວ ເຮົາກໍ່ຖືກສົ່ງມາຢູ່ແຂວງນີ້, ສ້າງຄອບຄົວຢູ່ພີ້ເລີຍ, ນີ້ເດ໋ລູກຊາຍເຮົາມັນໄຂ້ ເຂົ້າໂຮງໝໍສີ່ ຫ້ານື້ແລ້ວ ມື້ອື່ນຄືຊິໄດ້ອອກ "

" ເຮົາກໍມາໂຮງໝໍຄືກັນ ເມຍເຮົາເຈັບທ້ອງ !"

" ເຈັບທ້ອງອອກລູກຫວະ? ຢູ່ໃສ, ພາໄປຈອບເທາະ?"

" ບ້າລະຕີ້,ເຖົ້າປານນີ້ຍັງຊິເຈັບທ້ອງລູກຢູ່?"

ພໍ່ເຖົ້າໂຕ້ຕອບຍິ້ມແຍ້ມ,ແລ້ວທັງສອງເປັ່ງສຽງຫົວປະສານກັນເອີກອາກຍ່າງຄຽງໄຫຼ່ກັນອອກໄປຍັງຫ້ອງແມ່ເຖົ້າ,ເລື່ອງເກົ່າຄາວຫຼັງຖືກຮື້ຟື້ນກັນໃນຫ້ອງນີ້ອີກ,ແມ່ເຖົ້າຟັງໆ ແລ້ວເໝືອນທັງສອງຍັງໜຸ່ມແໜ້ນຫ້າວຫານຊານໄຊ.

" ເຖົ້າປານນີ້ ເຮົາຍັງບໍ່ມີເຮືອນຮັງ, ຫົວໝົ້ນຊົ້ນຕູບ ຮ້າຍກວ່າຍາມຕີເສິກ! ເຮົາສະເໜີຂໍໄມ້ ເພິ່ນໃຫ້ສາມສິບແມັດກ້ອນ, ຢາກໃຫ້ໂຮງເລື່ອຍຊອຍໃຫ້ ເຂົາພັດຂໍແບ່ງເຄິ່ງກະເລີຍໂຈະໄວ້ກ່ອນບາດທີຜູ້ອື່ນເຂົາເອົານຳແຕ່ນຶ່ງສ່ວນສາມຄ່າເລື່ອຍ ,ບາດທີເຮົາສັ່ງພັດຊິເອົາຮອດເຄິ່ງ, ເຂົາວ່າໄມ້ເຮົາມັນຢູ່ໄກ, ກະເລີຍຢ່າສັ໊ະ! ຊິປະໃຫ້ໄທບ້ານເລື່ອຍໃຫ້, ຫາງົວໃຫ້ເຂົາກິນຈັກສອງໂຕກະແລ້ວດອກ !

" ງົວໂຕທໍ່ໃດເຮີຍ ຢູ່ແຖວບ້ານໂຕ ?"

" ງົວປະມານສອງນ້ອງກະຊາວກວ່າພັນພຸ້ນໄດ໋ ແພງສົມຄວນຢູ່ "

" ເອີ..ເວົ້າຕໍ່ໄປເຮົາຟັງຢູ່ ເຮັດແນວໃດຈຶ່ງໄດ້ໄມ້ສຳປະທານ ?"

" ຕອນເຮັດໃບສະເໜີກະຍາກພໍແຮງໝູ່ເອີຍ! ຢູ່ເມືອງນັ້ນ ສະເໜີພ້ອມກັນສີ່ສິບຄົນ,ແຂວງອະນຸມັດໃຫ້ຊາວຄົນ ພວກເຈົ້ານາຍຢູ່ເມືອງຄັດຈ້ອນໃໝ່, ພວກບໍ່ມີເຮືອນຊົ້ນຖືກເຂ່ຍຖິ້ມໝົດ, ທີພວກມີເຮືອນມີລົດຂີ່ແລ້ວພັດໄດ້ສຳປະທານ ! ໃຜຊິຍອມ,ຂຶ້ນມາຖຽງເອົາຢູ່ແຂວງພີ້ແລ້ວ! ແຂວງສັ່ງໂຈະ ເພິ່ນຄົ້ນຄ້ວາໃໝ່ພວກເຮົາ

ເລີຍໄດ້ສຳປະທານຊັ້ນນ່າ. ບັດນີ້ ເມຍເຮົາເຈັບທ້ອງໄສ້ຕິ່ງ, ບໍ່ມີເງິນມາໂຮງໝໍເລີຍຂາຍສິດນັ້ນຖິ້ມ ຂາຍຖືກໆນີ້ແຫຼະ, ຄິດເສຍດາຍຢູ່ ຫາກກະຢ່າມັນສາເນາະ! ຫາກບໍ່ເຈັບບໍ່ໄຂ້ ກະຍັງໄຄຢູ່ໄດ໋ເວີ້ຍ! "

ເພື່ອນເກົ່ານັ່ງຟັງໂຈ່ໂລ່ງຶກຫົວໄປນຳ... ຮອດຍາມນີ້ ມີແພດເຂົ້າ ມາຢາມແມ່ເຖົ້າ, ຜູ້ມາລຸນໝູ່ ຊິງຊິແມ່ນທ່ານໝໍໃຫຍ່, ເຫັນນອບນ້ອມເຂົ້າມາຈັບມືເພື່ອນເກົ່າຂອງພໍ່ເຖົ້າ, ທ່ານຈັບບອກນາຍໝໍວ່າ:

" ນີ້ແມ່ນເຄນໝູ່ເກົ່າຂອງອ້າຍ,ຝາກທ່ານໝໍເບິ່ງແຍງໃກ້ຊິດແນ່ເດີ້! "

" ຈ້າວໆ! "

ທ່ານໝໍຕອບວ່າງ່າຍ ທັງຊຸ້ນຂ້ຽວກວດອາການແມ່ເຖົ້າ. ສອງສ່ຽວພາກັນອອກໄປນັ່ງຄອຍຖ້າຢູ່ລະບຽງນອກຫ້ອງ. ແພດອອກມາບອກວ່າ ຈະໄດ້ນຳເອົາແມ່ເຖົ້າໄປອະນາໄມ ຕຽມເຂົ້າຫ້ອງຜ່າຕັດ. ທ່ານຈັບ ແນະນຳວ່າຫຼັງຈາກ ຜ່າຕັດແລ້ວ ເຮົາຊິເປັນເຈົ້າພາບລ້ຽງເຂົ້າພວກທ່ານໝໍ, ມັນເປັນມາລະຍາດ ຂອງຄົນເມືອງ ແລະໂຕຢ່າລືມເອົາເງິນໃສ່ຊອງໃຫ້ເພິ່ນຄົບກັນ ຊອງລະທໍ່ໃດ ກະແລ້ວແຕ່ນ້ຳໃຈດອກ!

" ຊິໃຫ້ເຮົາເອົາໃສ ມາໃສ່ຊອງແຈກ ? ຄ່າຢາມັນກະໜັກພໍແຮງແລ້ວເລື່ອງເງິນນີ້ແຫຼະມັນເປັນສິ່ງຄານອີກແບບນຶ່ງ, ເຮົາສູ້ບໍ່ເປັນດອກໝູ່ເອີຍ,ໃຫ້ເຮົາຈັບປືນໄປສະໜາມຮົບໂລດ ມັນຄືຊິງ່າຍກ່ວາ "

****************************

ແມ່ເຖົ້າ ອອກຈາກຫ້ອງຜ່າຕັດ ເພິ່ນສັ່ງຂົນເຄື່ອງຍ້າຍໄປຢູ່ຕຶກຫຼັງໃໝ່, ສະອາດຄືໂຮງໝໍ ງາມຄືສວນດອກໄມ້.

ມາຢູ່ໂຮງໝໍສິບຫ້າມື້ ໃຊ້ເງິນໄປກ່ວາເຄິ່ງ, ແມ່ເຖົ້ານັ່ງຜິງແດດອ່ອນຍາມເຊົ້າໃກ້ປ່າດອກໄມ້ໜ້າຕຶກພະຍາບານ, ແມ່ເຖົ້າແຍງເບິ່ງສາວແພດ ມີແຕ່ຜູ້ງາມປ່ອຍລ່ອຍ...ຢາກມີລູກສາວນຳເພິ່ນຈັກຄົນເດ໋ ! ຄິດພໍ້ເຮືອນໂຕເອງ ພັດເປັນຫ່ວງເປັດໄກ່:ປານນີ້ອີແມ່ລາຍຊິພາລູກໂຕນຮັງແລ້ວບໍ່ຈັກ!...ແມ່ເຖົ້າກົ້ມເຂ່ຍດິນຢູ່ເຫງົ້າຕົ້ນດອກມະລິເຫັນແມງຫຍັງມັນໝົ້ນດິນຍຸດຍຸດກ້ຽວໆວຽນໆ ຢູ່ໃນດິນຊຸ່ມ,ດິນພຸເປັນຮອຍທາງໂງ້ງຮົວລາວເດ່ໄມ້ຈີ້ມດິນລັດໜ້າມັນ,ເຫັນແມງຊອນຂີ້ດື້ໂຕນັ້ນເດ່ຫົວຄາດລາດຂຶ້ນມາສ່ອງຫາຜູ້ກໍ່ກວນ ກ່ອນຫຼົບຫຼີກສິ່ງກີດຂວາງແລ້ວໝົ້ນລົງດຸດໄປທາງໃໝ່... ມັນຄົງຈະຫາຫຍັງກິນຂອງມັນລະຕີ້!

ມື້ນັ້ນ,ນາງແພດຍື່ນເຈ້ຍໃຫ້ພໍ່ເຖົ້າ, ມັນມີໃບຍັ້ງຢືນອອກໂຮງໝໍ, ຜົນກວດເທື່ອ ສຸດທ້າຍ,ໃບສັ່ງຢາແລະໃບແຈ້ງໜີ້. ລາວອ່ານບໍ່ອອກວ່າເຂົາຂຽນຫຍັງຫຍຸ້ງຫຍອງໄປໝົດ,ແຕ່ອັນເຂົ້າໃຈງ່າຍຄືຕົວເລກໜີ້ທີ່ຕ້ອງຈ່າຍ: ສອງແສນຊາວຫ້າພັນສາມຮ້ອຍກີບ. ລາວຍັງບໍ່ເຊື່ອວ່າມັນຈະຫຼາຍປານນັ້ນ, ນຳໄປຖາມນາງແພດຕອບວ່າ ແມ່ນແລ້ວ ຖືກຕ້ອງຕາມນັ້ນອີຫຼີ, ຫາກເງິນບໍ່ພໍກໍໃຫ້ໄປຫາຫົວໜ້າອຳນວຍການພຸ້ນໂລດ!

ຊາຍຊະລາເດີນສາມຂາ ຈິ່ກຈັ່ກ ຈິ່ກຈັ່ກ ໃນຈັງຫວະສະໝ່ຳສະເໝີ ມຸ່ງສູ່ຕຶກຫຼັງເຕ້ຍມີປ້າຍສີແດງຫ້ອຍຢູ່ເທິງປະຕູ ລາວຖາມສາວເລຂາ, ນາງຕອບອ່ອນໂຍນ:

" ທ່ານຫົວໜ້າເພິ່ນບໍ່ຢູ່, ພໍ່ມີວຽກຫຍັງກັບເພິ່ນບໍ?"

" ເອີ, ພໍ່ມີວຽກ ຢາກລົມກັບເຈົ້າຂອງໂຮງໝໍ "

" ຈ້າວ, ຄັນຊັ້ນ ເຊີນພໍ່ເຂົ້າພົບທ່ານຮອງກໍໄດ້"

ນາງຍ່າງໄປເປີດປະຕູເບື້ອງຊ້າຍໃຫ້ພໍ່ເຖົ້າເຂົ້າໄປຜູ້ດຽວ ນາງອັດປະຕູແຜ່ວເບົາ.ທ່ານຮອງບໍ່ໄດ້ຫຼຽວເບິ່ງຜູ້ເຂົ້າມາໃໝ່, ສາຍຕາສັກໃສ່ເຈ້ຍຢູ່ຕະຫຼອດເວລາ:

" ເຊີນນັ່ງ "

ເຂົາໃຊ້ຄຳນັ້ນແທນການທັກທາຍ, ພໍ່ເຖົ້າຄ່ອຍນັ່ງລົງຢ່າງລະວັງ ປານຕົນເປັນນັກໂທດ.

"ພໍ່ຢາກມາເວົ້າເລື່ອງຈ່າຍເງິນຄ່າຢາ, ຊິໄດ້ອອກໂຮງໝໍແລ້ວ "

" ເປັນຫຍັງເຈົ້າບໍ່ຈ່າຍໃຫ້ເຂົາຢູ່ຕຶກພຸ້ນໂລດ, ຢູ່ຫ້ອງບັນຊີແຄມຫ້ອງຈ່າຍຢາຫັ້ນເດ້!" ພໍ່ເຖົ້າໃຈເຕັ້ນຕຶກຕັກ ມິດຢູ່ຄາວນຶ່ງຈຶ່ງເວົ້າຕໍ່:

"ຄືວ່າ ພໍ່ມີບັນຫາຈັ່ງຊີ້, ໃນໃບແຈ້ງໜີ້ເປັນເງິນສອງແສນປາຍ ແຕ່ພໍ່ມີເງິນ ພຽງແສນດຽວ "

" ແສນດຽວ !" ເຂົາລື່ນຄຳພໍ່ເຖົ້າ, ຍິ້ມນ້ອຍນຶ່ງແລ້ວກືນສຽງຫົວລົງຮູຄໍ:

" ແສນດຽວບໍ່ໄດ້ດອກພໍ່ເອີຍ, ນີ້ລວມສະເພາະຄ່າຢາ ຄ່າເລືອດ ຄ່າຫ້ອງນອນເທົ່ານັ້ນໄດ໋! ຄັນຊິໄລ່ຄ່າລ່ວງເວລາຂອງແພດໝໍຄ່າເຄື່ອງມືຄ່ານ້ຳຄ່າໄຟແຮ່ງຊິເຕັກ ກ່ວານີ້ເດີ້ ຊິບອກ !"

"ພໍ່ຂໍຈ່າຍສະເພາະຄ່າຢາສາເນາະ ລູກເອີຍ !"

" ບໍ່ໄດ້ ມັນເປັນລະບຽບຂອງໂຮງໝໍ !" ເຂົາຕອບສຽງແຂງ

ໜັງໜ້າອັນຫ່ຽວຍານຂອງຊາຍພິການແດງກ່ຳຂຶ້ນ, ເນື້ອຕົວສະເມັ່ນຍິກຍັກ,ຄວາມຫຸນຫັນສະໄໝເປັນນັກຮົບໄດ້ປາກົດຂຶ້ນໃນແວວຕາຂອງຜູ້ເຖົ້າ

"ພໍ່ຂໍຮ້ອງນຳເທາະ, ຊິເຮັດແນວໃດມັນໝົດທີ່ນີ້

ຫຼືຊິຕັດແຄ່ງຕັດຂາອີກເບື້ອງ ພໍ່ກະຍອມ "

" ເຈົ້າຢ່າເວົ້າແນວນັ້ນແມ໋ !" ທ່ານຮອງແຜດສຽງ

ຝ່າຍພໍ່ເຖົ້າກໍສັ່ງຕົນເອງ ເຮັດແນວໃດແນວນຶ່ງໂດຍໄວ.

ໃນຂະນະທີ່ມືສັ່ນ,ລາວວາງໃບແຈ້ງໜີ້ລົງໜ້າໂຕະ,ທ່ານຮອງຈ້ອງຕາເບິ່ງບໍ່ວາງ, ພໍ່ເຖົ້າຈົກເງິນມັດລະແສນອອກມາເຕັ້ງໃບເຈ້ຍ, ຈົກມັດສິບພັນ ອອກມາວາງເຕັ້ງໝູ່ມັນ ລວມເປັນນຶ່ງແສນສິບພັນ.

ລາວຄ່ອຍລຸກຂຶ້ນ ປະຄອງຮ່າງ ຈ່ອຍຜອມດ້ວຍໄມ້ເທົ້າຊຶ່ງພະລັງ

ທັງ ສອງຂ້າງ. ລາວເວົ້າໂດຍບໍ່ງວາກໜ້າມາເບິ່ງທ່ານຮອງ:

"ກູມີເຄິ່ງດຽວ ເຄິ່ງນຶ່ງມັນກຸດ, ກ່ອນສູຊິໄດ້ເປັນເຈົ້າເປັນນາຍ "

ພ້ອມນັ້ນມີນ້ຳໃສໄຫຼອອກມາຈາກສອງຕາຊາຍຊະລາຜູ້ພິການ...

ລາວຍ່າງອອກໄປດ້ວຍອາດຊຶ່ງ ໝັ້ນຄົງເຢືອກເຢັນ, ດວງຕາຂຸ່ນມົວ ທັງຄູ່ລີ່ຫຼີບແສງຕາເວັນ...ມີເງົາຄຸມມຸມທອດລົງພື້ນຕິດຕາມໄປນຳຫຼັງ ດ້ວຍທ່ວງທ່າລີລາ ແລະຈັ່ງຫວະດຽວກັນກັບຊາຍພິການຜູ້ນຶ່ງ.

# ກາປະທັບ

*ພິມລົງໜັງສືພິມ ປະເທດລາວ ປີ 2000*

24 / VII





# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ